# ຄວາມຄືບໜ້າການຈັດຕັ້ງປະຕິບັດສະຫຼຸບ ກາງສະໄໝ ແຜນການ 5 ປີ ຄັ້ງທີ VIII (2016-2020)

ນຳສະເໜີໂດຍ ທ່ານ ກະລຸນາ ບັນທະວົງດວງສີ
ຮອງຫົວໜ້າກົມແຜນການ ກະຊວງ ແຜນການ ແລະ ການລົງທຶນ

# ເນື້ອໃນ:

I. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ

II. ຂໍ້ຂົງຂ້າງ ແລະ ສິ່ງທ້າທາຍ

III. ບາງມາດຕະການຈັດຕັ້ງປະຕິບັດ

# ຂະບວນການສະຫຼຸບຕີລາຄາກາງສະໄໝ

- **ດ້ານນິຕິກຳ:**

ສຳເລັດຂໍ້ຕົກລົງ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ່ 22/ນຍ ລົງວັນທີ 9 ເມສາ 2018 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ການສະຫຼຸບກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ສ້າງແຜນການ 5 ປີ ຄັ້ງທີ IX (2021-2025).

ສຳເລັດຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0956/ກຜທ, ລົງວັນທີ 2 ພຶດສະພາ 2018 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສະຫຼຸບກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ສ້າງແຜນການ 5 ປີ ຄັ້ງທີ IX (2021-2025).

ສຳເລັດຂໍ້ຕົກລົງ ຂອງກົມແຜນການ ກະຊວງ ຜທ ກ່ຽວກັບຄະນະຮັບຜິດຊອບການສະຫຼຸບກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ສ້າງແຜນການ 5 ປີ ຄັ້ງທີ IX (2021-2025).

ລັດຖະມົນຕີ ກະຊວງ ຜທ ອອກບົດແນະນຳກ່ຽວກັບການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

- ຈັດກອງປະຊຸມກັບບັນດາຂະແໜງການ ແລະ ບັນດາໜ່ວຍງານ Sector Working Group.
- ສຳເລັດຈັດກອງປະຊຸມວິຊາການ ເພື່ອປຶກສາຫາລືກ່ຽວກັບການສະຫຼຸບກາງສະໄໝ ທີ່ ແຂວງສາລະວັນ ແລະ ອຸດົມໄຊ; ແລະ ທີ່ວຽງຈັນ ແຂວງວຽງຈັນ. ໄດ້ສົ່ງຮ່າງປັບປຸງສະບັບທຳອິດ ໃຫ້ບັນດາຂະແໜງການ ແລະ ແຂວງເພື່ອມີຄຳເຫັນ.
- ຈະຈັດກອງປະຊຸມລະດັບວິຊາການຫຼາຍຄັ້ງ (16/8/2018: ປະຊຸມປຶກສາຫາລືລະດັບວິຊາການກັບບັນດາຄູ່ຮ່ວມພັດທະນາ)
- ໄດ້ຮັບຄຳເຫັນຈາກພາກສ່ວນກ່ຽວຂ້ອງ.

# I. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ

## ເປົ້າໝາຍ 1:

### 1. ຂະແໜງການຜະລິດ ແລະ ບໍລິການ

ການຂະຫຍາຍຕົວຂອງເສດຖະກິດ ຍັງສືບຕໍ່ເຕີບໂຕໃນລະດັບທີ່ດີຢູ່ ແຕ່ຢູ່ໃນຈັງຫວະທີ່ຊ້າລົງ ຢູ່ໃນລະດັບ 6,8% ປະຕິບັດໄດ້ 94% ຫຼຸດຈາກແຜນການທີ່ວາງໄວ້ (ແຜນດັດແກ້ 4 ປີ 7,2%).

- **ຂະແໜງກະສິກໍາ:** ສະເລັ່ຍ 3 ປີ ປະຕິບັດໄດ້ 2,73% (ປີ 2016 ຂະຫຍາຍຕົວ 2,8%, ປີ 2017 ຂະຫຍາຍຕົວ 2,9% ແລະ ຄາດຄະເນປີ 2018 ປະມານ 2,5%) ປະຕິບັດບໍ່ໄດ້ຕາມແຜນວາງໄວ້ (ແຜນການ 3,4%).
- **ຂະແໜງອຸດສາຫະກໍາ**: ຂະຫຍາຍຕົວສະເລັ່ຍ 3 ປີ ປະຕິບັດໄດ້ 10,43%, ລື່ນແຜນການທີ່ວາງໄວ້ 9,3% (ປີ 2016 ຂະຫຍາຍຕົວ 12%, ປີ 2017 ຂະຫຍາຍຕົວ 11,6% ແລະ ຄາດຄະ ເນປີ 2018 ປະມານ 7,7%).
- **ຂະແໜງບໍລິການ**: ມີການເຕີບໂຕ ແຕ່ກໍມີທ່າອ່ຽງຫຼຸດລົງ ສະເລ່ຍ 3 ປີ ປະຕິບັດໄດ້ 5,60% ບໍ່ໄດ້ຕາມແຜນການທີ່ແຜນວາງໄວ້ 8,1% (ປີ 2016 ຂະຫຍາຍຕົວ 4,7%, ປີ 2017 ຂະຫຍາຍຕົວ 4,5% ແລະ ຄາດຄະເນປີ 2018 ປະມານ 7,6%).
- **ພາສີອາກອນຂາເຂົ້າ**: ປະຕິບັດໄດ້ 6,16% ແຜນການທີ່ວາງໄວ້ 5% (ປີ 2016 ຂະຫຍາຍຕົວ 7,8%, ປີ 2017 ຂະຫຍາຍຕົວ 7% ແລະ ຄາດຄະເນປີ 2018 ປະມານ 3,7%).

# 2. ເສດຖະກິດມະຫາພາກ

## ບາງຄາດໝາຍຕົ້ນຕໍ:

| ລວມຍອດຜະລິດຕະພັນພາຍໃນ (GDP) | | | | | | |
|---|---|---|---|---|---|---|
| ລ/ດ | ລາຍລະອຽດ | ຄາດໝາຍສູ້ຊົນ (2016-2020) | ປະຕິບັດປີ 2016 | ປະຕິບັດປີ 2017 | ຄາດຄະເນໝົດ 2018 | ສະເລ່ຍ (3 ປີ) |
| **I** | **GDP ເພີ່ມຂຶ້ນ (%)** | **>7,2** | **7,0** | **6,90** | **6,5** | **6,8** |
| 1 | - ກະສິກຳ-ປ່າໄມ້ (%) | 3,4 | 2,8 | 2,90 | 2,5 | 2,73 |
| 2 | - ອຸດສາຫະກຳ (%) | 9,3 | 12,0 | 11,60 | 7,7 | 10,43 |
| 3 | - ການບໍລິການ (%) | 8,1 | 4,7 | 4,50 | 7,6 | 5,60 |
| 4 | - ພາສີອາກອນຜະ ລິດຕະພັນ ແລະ ການນຳເຂົ້າ (%) | 5 | 7,8 | 7 | 3,7 | 6,17 |
| **II** | **ໂຄງປະກອບ (%)** | | | | | |
| 1 | - ກະສິກຳ-ປ່າໄມ້ (%) | 16,8 | 17,23 | 16,20 | 15,7 | 16,38 |
| 2 | - ອຸດສາຫະກຳ (%) | 39 | 28,76 | 30,9 | 31,7 | 30,47 |
| 3 | - ການບໍລິການ (%) | 35,4 | 42,48 | 41,5 | 41,7 | 41,90 |
| 4 | - ພາສີອາກອນຜະລິດຕະພັນ ແລະ ການນຳເຂົ້າ (%) | 5 | 11,53 | 11,4 | 10,9 | 11,27 |

| ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕໍ່ຫົວຄົນ | | | | | | |
|---|---|---|---|---|---|---|
| ລ/ດ | ລາຍລະອຽດ | ຄາດໝາຍສູ້ຊົນ (2016-2020) | ປະຕິບັດປີ 2016 | ປະຕິບັດປີ2017 | ຄາດຄະເນໝົດປີ 2018 | ສະເລ່ຍ (3 ປີ) |
| 1 | ຈຳນວນປະຊາກອນ (ລ້ານຄົນ) | | 6,60 | 6,92 | 7,04 | - |
| 2 | ມູນຄ່າ GDP ລາຄາປະຈຸບັນ (ຕື້ກີບ) | 173.329 | 129.279 | 140.749 | 152.436 | - |
| 3 | GDP ຕໍ່ຫົວຄົນ (ໂດລາສະຫະລັດ) | 2.978 | 2.408 | 2.468 | 2.609 | - |
| 4 | GNI ຕໍ່ຫົວຄົນ (ໂດລາສະຫະລັດ) | 2.354 | | | 1.996 | - |

## ➢ ດ້ານງົບປະມານ:

ການປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ມີການຂະຫຍາຍຕົວເພີ່ມຂຶ້ນ, ແຕ່ກໍຍັງບໍ່ສາມາດບັນລຸໄດ້ຕາມແຜນການທີ່ສະພາຮັບຮອງ. ເຊິ່ງເຫັນໄດ້ວ່າ: ການຂາດດຸນງົບປະມານ ໃນໄລຍະ 3 ປີ ຜ່ານມາ ລື່ນຄາດໝາຍທີ່ກຳນົດໄວ້ໃນແຜນການ 5 ປີ (4,23%) ປະກອບມີ:

* ໃນປີ 2016 ປະຕິບັດໄດ້ 22.287,59 ຕື້ກີບ ເທົ່າກັບ 94% ຂອງ ແຜນການ.
* ໃນປີ 2017 ປະຕິບັດໄດ້ 22.962,32 ຕື້ກີບ, ເທົ່າກັບ 96,89% ຂອງ ແຜນການ.
* ໃນປີ 2018 ອັດຕາການຂາດດຸນຈະຢູ່ໃນລະດັບ 4,95% ຂອງ GDP.

# ສັງລວມການຈັດຕັ້ງປະຕິບັດແນ 5 ປີ (2016-2020 ໄລຍະ 2.5 ປີ (2016-2018)

ອີງຕາມກອບແຜນ 5 ປີ ຄັ້ງທີ VIII (2016-2020)

| ລ/ດ | ຊື່ ແລະ ທີ່ຕັ້ງໂຄງການ | ກອບແຜນ 5 ປີ 2016-2020 ດັດແກ້ 4 ປີ | % | ລວມ 2.5 ປີ (2016-2018) | | % ທຽບອານຸມັດຕົວຈິງກັບທີ່ວາງໄວ | % ປະຕິບັດແຜນ 2.5 ປີ ກັບແຜນອະນຸມັດຕົວຈິງ | % ປະຕິບັດລວມ 2.5 ປີ ທຽບໃສ່ກອບແຜນ 5 ປີ (ຕາມແຜນດັດແກ້ 4 ປີ) |
|---|---|---|---|---|---|---|---|---|
| | | | | ລວມແຜນວາງໄວປະຈຳປີ | ແຜນຕົວຈິງປະຕິບັດໝົດປີ | | | |
| | | | | ທຶນພາຍໃນ | ທຶນພາຍໃນ | | | |
| 1 | 2 | 3 | 4 | 5 | 6 | 7=5/3 | 8=6/5 | 9=6/3 |
| 1 | ການລົງທຶນທັງໝົດ | **173,329,000.00** | **100%** | **109,954,000.00** | **128,400,098.31** | **63.44%** | **116.78%** | **74.08%** |
| 2 | ການລົງທຶນຈາກງົບປະມານຂອງລັດ | 20,799,480.00 | 12% | 13,763,000.00 | 10,249,878.31 | 66.17% | 74.47% | 49.28% |
| 3 | ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ | 31,199,220.00 | 18% | 22,744,000.00 | 18,090,010.00 | 72.90% | 79.54% | 57.98% |
| 4 | ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ | 84,931,210.00 | 49% | 50,184,000.00 | 81,561,820.00 | 59.09% | 162.53% | 96.03% |
| 5 | ການລົງທຶນຂາກລະບົບເງິນຕາ | 36,399,090.00 | 21% | 23,263,000.00 | 18,498,390.00 | 63.91% | 79.52% | 50.82% |

# ເປົ້າໝາຍ 2:

1) **ດ້ານການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:** ໂດຍລວມແລ້ວການແກ້ໄຂຄວາມທຸກຍາກມີຄວາມຄືບໜ້າດີສົມຄວນ. ພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມໃນເຂດຊົນນະບົດໄດ້ຮັບການປັບປຸງ ແລະ ກໍ່ສ້າງເປັນຕົ້ນ ໂຮງຮຽນ, ສຸກສາລາ, ທາງຊົນນະບົດ, ຊົນລະປະທານຂະໜາດນ້ອຍ ແລະ ການສົ່ງເສີມທາງດ້ານວິຊາການກ່ຽວກັບການປູກຝັງ ແລະ ລ້ຽງສັດ. ວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກກໍ່ມີຄວາມຄືບໜ້າດໃນລະດັບໜຶ່ງ ເຊິ່ງສາມາດກວດ ແລະ ເກັບກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນໄດ້ທັງໝົດ 9.978 ເຮັກຕາ ເທົ່າກັບ 33,26% ຂອງແຜນການ 5 ປີ, ມີອຸປະຕິເຫດຈາກລະເບີດບໍ່ທັນແຕກຕົກຄ້າງ 64 ຄັ້ງ ມີຜູ້ໄດ້ຮັບເຄາະຮ້າຍ 98 ຄົນ, ໃນນີ້ ເສຍຊີວິດ 16 ຄົນ, ໃຫ້ການຊ່ວຍເຫຼືອ ຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ ທີ່ໄດ້ຮັບການປິ່ນປົວ, ຟື້ນຟູສຸຂະພາບ, ປະກອບອົງຄະທຽມ, ການສຶກສາຈຳນວນ 1.156. ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການມີຄວາມຄືບໜ້າດີຂຶ້ນ. ເທື່ອລະກ້າວ ເຮັດໃຫ້ອັດຕາຄອບຄົວທຸກຍາກຫຼຸດຍັງເຫຼືອ 5,34% (ແຜນຍັງເຫຼືອບໍ່ເກີນ 5%) ແມ່ນເຫັນວ່າໃກ້ບັນລຸຄາດໝາຍ.

2) **ວຽກງານສຶກສາ, ພັດທະນາຊັບພະຍາກອນມະນຸດ ແລະ:** ໄດ້ສືບຕໍ່ປະຕິຮູບແລະ ພັດທະນາໃນຫຼາຍດ້ານໂດຍສະເພາະແມ່ນພື້ນຖານໂຄງລ່າງດ້ານການສຶກສາ, ລະບົບການຮຽນ-ການສອນໄດ້ຮັບການປັບປຸງໃຫ້ດີຂຶ້ນ ນັບແຕ່ຂັ້ນລ້ຽງເດັກ-ອະນຸບານຈົນເຖິງຂັ້ນມັດທະຍົມຕອນປາຍ; ອັດຕາເຂົ້າຮຽນລວມຂອງເດັກອາຍຸ 5 ປີ ເພີ່ມມາເປັນ 77,1%, ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ ເພີ່ມມາເປັນ 98,8%, ອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມສຶກສາຕອນຕົ້ນເພີ່ມມາເປັນ 83,1%, ອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມສຶກສາຕອນປາຍເພີ່ມມາເປັນ 53,40% ແລະ ຜູ້ສະໝັກເຂົ້າຮຽນໃນສາຍອາຊີວະສຶກສາກໍ່ມີທ່າອ່ຽງເພີ່ມຂຶ້ນ.

# ເປົ້າໝາຍ 2:

**3). ວຽກງານສາທາລະນະສຸກ:** ໄດ້ມີການປະຕິຮູບ ແລະ ການຂະຫຍາຍຕົວທາງດ້ານປະລິມານແລະ ຄຸນນະພາບ; ການບໍລິການຮັກສາສຸຂະພາບຂັ້ນຕົ້ນ ໄດ້ຮັບການປັບປຸງດີຂຶ້ນ, ພື້ນຖານໂຄງລ່າງດ້ານສາທາ ລະນະສຸກໄດ້ຮັບການຂະຫຍາຍລົງສູ່ເຂດຊົນນະບົດ ຈຳນວນສຸກສາລາ ແລະ ຖົງຢາປະຈຳບ້ານເພີ່ມຂຶ້ນ ເຮັດໃຫ້ຕາໜ່າງສາທາລະນະສຸກສາມາດປົກຄຸມເຖິງ 98% ຂອງທົ່ວປະເທດ; ອັດຕາແມ່ຍິງຖືພາທີ່ໄດ້ກວດທ້ອງເພີ່ມຈາກ 50,6% ມາເປັນ 52,2% ໃນປີ 2017, ການເກີດລູກມີແພດຊ່ວຍໄດ້ເພີ່ມຈາກ 51,6% ມາເປັນ 56,4% ໃນປີ 2017, ຂະບວນການສົ່ງເສີມການປະຕິບັດຫຼັກການອະນາໄມ 3 ສະອາດ, ການອົບຮົມຄວາມຮູ້ດ້ານໂພຊະນາການ, ການສັກຢາ ແລະຢອດຢາກັນພະຍາດ, ນະໂຍບາຍເກີດລູກ ແລະ ປິ່ນປົວເດັກນ້ອຍອາຍຸຕໍ່າກວ່າ 5 ປີແບບບໍ່ເສຍຄ່າ, ການເຝົ້າລະວັງພະຍາດລະບາດ , ໂຄສະນາວຽກງານສັກຢາກັນພະຍາດ ແມ່ນມີຄວາມຄືບໜ້າພໍສົມຄວນ.

**4. ການບໍລິການດ້ານສະຫວັດດີການສັງຄົມ:** ການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ອອກແຮງງານ ຕາມກົດໝາຍ ແລະ ລະບຽບການ, ລະບົບປະກັນສັງຄົມໄດ້ຮັບການພັດທະນາ ແລະ ຂະຫຍາຍອັດຕາປົກຄຸມຫຼາຍຂຶ້ນ, ການບໍລິການອຸດໜູນປະກັນສັງຄົມ ປະເພດຕ່າງໆ ມີຄວາມວ່ອງໄວກ່ວາເກົ່າ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດ ໄດ້ຮັບການຈັດ ຕັ້ງປະຕິບັດ ຕໍ່ກຸ່ມເປົ້າໝາຍຕ່າງໆ ຫຼາຍຂຶ້ນ, ຜູ້ອາຍຸສູງ ແລະ ພິການໄດ້ຮັບການຄຸ້ມຄອງດີຂຶ້ນ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດ ແລະ ຜູ້ປະສົບໄພພິບັດຕ່າງໆ ໄດ້ຮັບການຊ່ວຍເຫຼືອສົງເຄາະໄວຂຶ້ນ,

**5. ວຽກງານຖະແຫຼງຂ່າວ, ວັດທະນະທໍາ:** ກໍ່ໄດ້ຮັບການພັດທະນາຢ່າງຕັ້ງໜ້າໂດຍສະເພາະແມ່ນວຽກງານຖະແຫຼງຂ່າວກໍ່ໄດ້ທັນເຂົ້າສູ່ທັນສະໄໝ ແລະ ມີຄຸນນະພາບສູງຂຶ້ນ ກາຍເປັນກະບອກສຽງທີ່ສໍາຄັນໃຫ້ແກ່ພັກ ແລະ ລັດຖະ ບານ. ປະຈຸບັນແຫຼ່ງທ່ອງທ່ຽວທາງດ້ານທໍາມະຊາດ, ວັດທະ ນະທໍາ ແລະ ທໍາມະຊາດໄດ້ຮັບການພັດທະນາ ແລະ ມີຈໍານວນເພີ່ມຂຶ້ນ, ແຕ່ຍັງບໍ່ທັນສາ ມາດດຶງດູດນັກທ່ອງທ່ຽວທີ່ມີຄຸນນະພາບ ແລະ ຍັງບໍ່ທັນສາມາດເພີ່ມລາຍຮັບຈາກການທ່ອງທ່ຽວໄດ້ ເນື່ອງຈາກພື້ນຖານໂຄງລ່າງ ແລະ ຄຸນນະພາບຂອງການບໍລິການຍັງຈໍາກັດ.

# ເປົ້າໝາຍ 3:

1) ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ກໍ່ໄດ້ມີການປັບປຸງກົດໝາຍ, ລະບຽບການ ແລະບັນດາບົດແນະນໍາຫຼາຍສະບັບ, ໄດ້ສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານໃນທຸກຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນທ້ອງຖິ່ນ ແລະ ໄດ້ດໍາເນີນການແລ້ວຢູ່ຂັ້ນແຂວງ ແລະ ຂໍ້ມູນການປົກຫຸ້ມຂອງປ່າໄມ້ໄດ້ຮັບການປັບປຸງມີຄວາມຖືກຕ້ອງ ແລະ ຊັດເຈນກວ່າເກົ່າເຫັນວ່າ ອັດຕາປົກຫຸ້ມຂອງປ່າໄມ້ຢູ່ໃນລະດັບ 58%;
2) ການຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດ ແລະ ການປ່ຽນແປງຂອງດິນຟ້າອາກາດສໍາເລັດການປັບປຸງສະຖານີ ອຸຕຸນິຍົມ ໃຫ້ເປັນລະບົບທັນສະໄໝ ເຊິ່ງປະຈຸບັນ ສໍາເລັດ 33 ສະຖານີ, ເອົາໃຈໃສ່ສົ່ງເສີມການເຮັດກະສິກໍາທີ່ສາມາດຮັບມືກັບການປ່ຽນແປງຂອງດິນຟ້າອາກາດ.

# ຂະແໜງການທີ່ພົວພັນກັບຫຼາຍຂະແໜງການ

- ໄດ້ປັບປຸງກົງຈັກການຈັດຕັ້ງລັດຢູ່ແຕ່ລະຂັ້ນ, ໃນນັ້ນ ໄດ້ສຳເລັດການສະຫຼຸບຕີລາຄາກົງຈັກລັດຖະບານ ຊຸດທີ VIII ເປັນຕົ້ນແມ່ນກະຊວງສ້າງຕັ້ງໃໝ່ ແລະ ກະຊວງທີ່ໂຮມວຽກເຂົ້າກັນ ຄຽງຄູ່ກັບການປັບປຸງກົງຈັກນັ້ນ ກໍໄດ້ຄົ້ນຄ້ວາປັບປຸງ-ສັບຊ້ອນບາງວຽກງານຂອງລັດຖະບານ ເຊັ່ນ: ສັບຊ້ອນໂອນຄະນະຕ່າງໆທີ່ຂຶ້ນກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄປຂຶ້ນກັບກະຊວງທີ່ມີພາລະບົດບາດກ່ຽວພັນກັນ
- ໄດ້ປັບປຸງນະໂຍບາຍ, ນິຕິກຳ ແລະ ລະບຽບບໍລິຫານລັດເພື່ອການພັດທະນາກົດໝາຍ ແລະ ລະບຽບການຕ່າງໆໃຫ້ຈະແຈ້ງ, ຮັດກຸມ ແລະ ມີຄວາມສັກສິດ ເຊິ່ງສຳເລັດການຄົ້ນຄ້ວາ ແລະປັບປຸງນິຕິກຳຈຳນວນໜຶ່ງ

# ຂະແໜງການທີ່ພົວພັນກັບຫຼາຍຂະແໜງການ

- ໄດ້ຈັດຕັ້ງປະຕິບັດໂຄງການຄົ້ນຄວ້າວິທະຍາສາດ ຈຳນວນ 104 ໂຄງການ ເພື່ອຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ, ຍືນຍົງ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ. ໃນນັ້ນ, ມີໂຄງການທີ່ພົ້ນເດັ່ນເປັນຕົ້ນ: ໄດ້ຄົ້ນຄວ້າສຳເລັດພຶດເປັນຢາ 20 ກວ່າຊະນິດທີ່ມີສານສາມາດໄຊ້ເປັນຢາ, ຄົ້ນຄວ້າສ້າງຫຸ່ນຍົນເກັບກູ້ ແລະ ທຳລາຍລະເບີດ ແລະ ໂຄງການ ອື່ນໆ; ໄດ້ສ້າງພື້ນຖານໂຄງລ່າງອັນຈຳເປັນ ເພື່ອຮັບໃຊ້ການຄົ້ນຄວ້າ-ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເປັນຕົ້ນແມ່ນສຳເລັດການສ້າງສູນຂໍ້ມູນ ທີ່ປະຫຍັດພະລັງງານຢ່າງມີປະສິດທິພາບ ຂອງສປປ ລາວ, ສ້າງສູນຝຶກອົບຮົມພະນັກງານຄຸ້ມຄອງວິທະຍາສາດ ແລະ ເຕັກໂນໂລຊີ. ໄດ້ຄົ້ນຄ້ວາ ແລະ ພັດທະນາຊອບແວຣ ຈຳນວນໜຶ່ງ ເຊັ່ນ: ໂປແກຣມຄຸ້ມຄອງພະນັກງານ, ໂປຣແກຣມຄຸ້ມຄອງຊັບສິນ, ໂປຣແກຣມຄຸ້ມຄອງເອກະສານ, ໂປຣແກຣມຄຸ້ມຄອງນັບຄະແນນສຽງເລືອກຕັ້ງ.
- ໄດ້ມີການຂະຫຍາຍໂຄງລ່າງພື້ນຖານໂທລະຄົມມະນາຄົມແຕ່ສູນກາງລົງຮອດທ້ອງຖິ່ນທັງໃນຕົວເມືອງ ແລະ ຊົດນະບົດເຂດຫ່າງໄກສອກຫຼີກໃນຂອບເຂດທົ່ວປະເທດ ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງ ແລະ ນຳໃຊ້ໄດ້ສະດວກສະບາຍ ເປັນຕົ້ນ ສາມາດຂະຫຍາຍສາຍກາບໄຍແສງ, ); ສະຖານີຮັບສົ່ງສັນຍານໂທລະສັບມືຖື ຄວບຄຸມໄດ້ 18 ແຂວງກວມ 91% ຂອງຈຳນວນບ້ານທັງໝົດ .
- ການສົ່ງເສີມ ແລະ ພັດທະນາແມ່ຍິງ, ເຍົາວະຊົນ ແລະ ຊາວໜຸ່ມ ກໍ່ໄດ້ຮັບການເອົາໃຈໃສ່ ແລະ ມີຄວາມຄືບໜ້າຫຼາຍດ້ານ.

ສະຫລຸບແລ້ວ, ໃນ 2 ປີເຄິ່ງ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII ມີຄວາມຄືບໜ້າຫຼາຍດ້ານ, ສປປລາວສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ວັດທະນະທຳ-ສັງຄົມມີການພັດທະນາຢ່າງຕັ້ງໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ. ການປົກປັກຮັກສາສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດກໍ່ໄດ້ຮັບການເອົາໃຈໃສ່ ຄຽງຄູ່ກັບການຈັດຕັ້ງປະຕິບັດເປົ້າໝາຍການເຕີບໂຕສີຂຽວ (Green Growth) ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ສືບຕໍ່ກະກຽມຄວາມພ້ອມ ໃນການກ້າວໄປສູ່ການຫຼຸດພົ້ນອອກສະຖານະພາບຄວາມດ້ອຍພັດທະນາ (LDC) ໃນຕໍ່ໜ້າ.

**ໝາກຜົນທີ່ພວກເຮົາໄດ້ຮັບໃນເບື້ອງຕົ້ນນັ້ນ,** ແມ່ນຍ້ອນມີແນວທາງນະໂຍບາຍທີ່ຖືກຕ້ອງ; ຄວາມເປັນເຈົ້າການຂອງປະຊາຊົນບັນດາຊັ້ນຄົນ ແລະ ການປະກອບ ສ່ວນຂອງທຸກພາກສ່ວນໃນສັງຄົມ ຍ້ອນການສະໜັບສະໜູນຊ່ວຍເຫລືອຢ່າງມີປະສິດທິພາບຂອງບັນດາປະເທດເພື່ອນມິດ, ບັນດາອົງການຈັດຕັ້ງສາກົນ ແລະ ບັນດາຄູ່ຮ່ວມພັດທະນາ.

# II. ຈຸດອ່ອນ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ

1. ການເຕີບໂຕຕົວຂອງ GDP ຍັງບໍ່ທັນມີຄຸນນະພາບເທົ່າທີ່ຄວນ ຍັງອີງໃສ່ຊັບພະຍາກອນ ທຳມະຊາດເປັນຕົ້ນຕໍ, ສ່ວນຂະແໜງການຜະລິດຍັງບໍ່ທັນປະກອບສ່ວນຢ່າງແຂງແຮງ ຈຶ່ງເຮັດໃຫ້ການເຕີບໂຕຂອງເສດຖະກິດຢູ່ໃນຈັງຫວະທີ່ຊ້າລົງ ແລະ ຄາດວ່າຈະບໍ່ສາມາດບັນລຸໄດ້ຕາມແຜນການ ແລະ ຄາດໝາຍດັດແກ້ມະຫາພາກທີ່ກຳນົດໄວ້.
2. ການເກັບລາຍຮັບຍັງບໍ່ຄົບຖ້ວນ ແລະ ບໍ່ສາມາດກຸ້ມໄດ້ລາຍຈ່າຍພາຍໃນທີ່ຈຳເປັນໃນແຕ່ລະປີ ຈຶ່ງເຮັດໃຫ້ມີອັດຕາການຂາດດຸນງົບປະມານສູງ ແລະ ເຮັດໃຫ້ມີຄວາມກົດດັນຕໍ່ສະພາບຄ່ອງທາງດ້ານເສດ ຖະກິດ ແລະ ການພັດທະນາ.
3. ການຄຸ້ມຄອງການລົງທຶນຂອງລັດ, ການຊ່ວຍເຫຼືອ-ກູ້ຢືມຈາກຕ່າງປະເທດ ແລະ ການລົງທຶນຂອງພາກເອກະຊົນຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

# II. ຈຸດອ່ອນ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ

4. ສະມັດຕະພາບຂອງການຜະລິດຍັງບໍ່ທັນສູງ, ຍັງມີລັກສະນະທຳມະຊາດ ຈຶ່ງເຮັດໃຫ້ການຜະລິດກະສິກຳເປັນສິນຄ້າຕິດພັນກັບ ອຸດສາຫະກຳປຸງແຕ່ງບໍ່ທັນຂະຫຍາຍຕົວດີ ແລະ ບໍ່ທັນສົມຄູ່ກັບທ່າແຮງຂອງປະເທດ, ການນຳໃຊ້ເຕັກໂນໂລຊີໃໝ່, ທັນສະໄໝ, ນະວັດຕະກຳໃໝ່ແດ່ກໍ່ເຫັນວ່າຍັງມີໜ້ອຍ, ການປູກໄມ້ອຸດສາຫະກຳທົດແທນເພື່ອສ້າງລາຍຮັບໃຫ້ແກ່ປະເທດຍັງຈຳກັດ.

5. ການຜະລິດ ແລະ ການແຂ່ງຂັນ ຂອງ SME ຍັງບໍ່ທັນຂະຫຍາຍຕົວ ເຖິງວ່າມີນິຕິກຳທີ່ຮັບຮອງແລ້ວ ຫຼາຍສະບັບແຕ່ກໍ່ຍັງບໍ່ທັນສາມາດ ຊຸກຍູ້ສົ່ງເສີມໃຫ້ SME ເຕີບໃຫຍ່ຂະຫຍາຍຕົວໃຫ້ກາຍເປັນພື້ນຖານໃຫ້ແກ່ເສດຖະກິດແຫ່ງຊາດໄດ້.

6. ການພັດທະນາຊັບພະຍາກອນມະນຸດ ທາງດ້ານປະລິມານ ແລະ ຄຸນນະພາບ ຍັງບໍ່ທັນສາມາດຕອບສະໜອງຕໍ່ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່ (ຍັງມີລັກ ສະນະໄປຕາມຄ່ານິຍົມຂອງສັງຄົມ) ຕົວຢ່າງ: ແຮງງານທີ່ຊໍານານ ແລະ ມີລະບຽບວິໄນມີຈໍານວນຈໍາ ກັດຫຼາຍ, ເຮັດໃຫ້ໂຄງການໃຫຍ່ຈໍານວນໜຶ່ງ ຈໍາເປັນຕ້ອງໄດ້ນໍາໃຊ້ແຮງງານຕ່າງປະເທດ.

7. ການພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນຍັງບໍ່ທັນເຂົ້າສູ່ລວງເລິກເທົ່າທີ່ຄວນ ຈຶ່ງເຮັດໃຫ້ມີຄວາມແຕກໂຕນຂອງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ ແລະ ເຮັດໃຫ້ຄວາມເລື່ອມລໍ້າຢູ່ໃນສັງຄົມຂະຫຍາຍກວ້າງອອກ.

8. ການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍຍັງບໍ່ທັນເຂັ້ມງວດ, ກົງຈັກລັດຍັງບໍ່ທັນກະທັດຮັດ ແລະ ການປະສານງານລະຫວ່າງສາຍຕັ້ງສາຍຂວາງ ແລະ ການຕິດຕາມກວດກາແຕ່ລະວຽກງານຍັງບໍ່ທັນເປັນລະບົບ ແລະ ຄ່ອງຕົວເທົ່າທີ່ຄວນ.

# III. ບາງມາດຕະການຈັດຕັ້ງປະຕິບັດແຜນພັດທະນາ ໃນທ້າຍສະໄໝ.

1. ຍົກສູງຄວາມເປັນເຈົ້າການໃນການຊີ້ນຳ-ນຳພາ, ເອົາໃຈໃສ່ປຸກລະດົມບັນດາຫົວໜ່ວຍວິສາຫະກິດຂອງລັດ ແລະ ເອກະຊົນ, ທຸກຫົວໜ່ວຍເສດຖະກິດ, ທົ່ວສັງຄົມເຂົ້າຮ່ວມ ແລະ ປະກອບ ສ່ວນໃນການພັດ ທະນາຢ່າງຕັ້ງໜ້າ ໂດຍການກຳນົດ ແລະມອບຄວາມຮັບຜິດຊອບໃຫ້ກົມກອງ ຫຼື ພະ ແນກການ ແລະ ເມືອງຢ່າງລະອຽດ, ຄົ້ນຄວ້າກຳນົດຄາດ ໝາຍສູ້ຊົນລະອຽດ, ຈັດສັນງົບປະມານແລະສະໜອງບຸກຄະລາກອນຢ່າງສອດຄ່ອງດ້ວຍການກຳນົດຢ່າງຈະແຈ້ງຢູ່ໃນແຜນພັດທະນາປະຈຳປີຂອງຂະແໜງການແລະທ້ອງຖິ່ນ.
2. ເພີ່ມທະວີການຂຸດຄົ້ນລາຍຮັບຈາກຖານລາຍຮັບທີ່ມີແລ້ວໃຫ້ຄົບຖ້ວນ ໂດຍໃຫ້ບັນດາຜູ້ປະກອບການເປັນເອກະພາບກັນໃນການຖືບັນຊີທຸລະກິດ, ປະກອບອຸປະກອນ, ເຕັກນິກ, ເຄື່ອງມືທີ່ທັນສະໄໝ ຊຳລະສະສາງຜ່ານລະບົບທະນາຄານຍົກລະດັບຄວາມສາມາດຂອງພະນັກງານໃນການຄຸ້ມຄອງ ແລະ ເກັບລາຍຮັບຢ່າງເປັນລະບົບຮັດກຸມ, ໂປ່ງໃສ.
3. ສືບຕໍ່ນຳໃຊ້ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ດັດສົມຕະ ຫຼາດເງິນຕາຕ່າງປະເທດໃນເມື່ອເຫັນວ່າຈຳເປັນ ແລະ ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດຢ່າງຕັ້ງໜ້າແນ່ໃສ່ສູ້ຊົນເພີ່ມລະດັບຄັງສຳຮອງໃຫ້ໄດ້ຕາມແຜນທີ່ກຳນົດໄວ້.

# III. ບາງມາດຕະການຈັດຕັ້ງປະຕິບັດແຜນພັດທະນາ ໃນທ້າຍສະໄໝ.

4. ຕັ້ງໜ້າຄຸ້ມຄອງການນຳໃຊ້ທຶນຂອງລັດ, ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີປະສິດທິຜົນ, ປະຢັດ; ສະກັດກັ້ນປະກົດການຫຍໍ້ທໍ້ທາງດ້ານການເງິນແລະການນຳໃຊ້ງົບປະມານແຫ່ງລັດ; ສົ່ງເສີມກົນໄກເສດຖະກິດຕະຫຼາດທີ່ມີການວາງແຜນຢ່າງເປັນລະ ບົບຄົບຊຸດ; ຈຳກັດທຸກຮູບການເກື້ອກູນ, ຫລີກລ້ຽງການໃຊ້ຈ່າຍຟຸມເຟືອຍ ໂດຍມີການໄລ່ລຽງປະໂຫຍດ, ຕົ້ນທຶນແລະປະສິດທິຜົນຂອງການລົງທຶນຢ່າງຊັດເຈນ ດ້ວຍການໃຫ້ທຸກພາກສ່ວນປະ ຕິບັດວິໄນແຜນການ, ວິໄນການເງິນຢ່າງເຂັ້ມງວດ ເພື່ອເຮັດໃຫ້ການນຳໃຊ້ທຶນມີປະສິດທິຜົນສູງ ແລະ ຫລຸດຜ່ອນໜີ້ສິນລົງເປັນກ້າວໆ.

5. ເອົາໃຈໃສ່ຊຸກຍູ້ສົ່ງເສີມ ໃຫ້ບັນດາໂຄງການລົງທຶນຂະໜາດໃຫ່ຍທີ່ໄດ້ເຊັນສັນຍາແລ້ວໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນການ, ຊຸກຍູ້ຕິດຕາມກວດກາສະ ພາບການຈັດຕັ້ງປະຕິບັດບັນດາໂຄງການທີ່ໄດ້ອະນຸຍາດໄປແລ້ວນັ້ນ ໃຫ້ດຳເນີນຢ່າງເປັນລະບົບ ແລະ ສອດຄ່ອງກັບກົດໝາຍ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ.

6. ປັບປຸງ ແລະ ພັດທະນາການສຶກສາ ແລະ ສາທາລະນະສຸກໃຫ້ມີຄຸນນະພາບສູງຂຶ້ນ ສະໜອງໂຄງລ່າງພື້ນຖານ, ອຸປະກອນຮັບໃຊ້ການຮຽນ-ການສອນ, ຄູສອນ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດຈຸດສຸມພັດທະນາຂອງລັດຖະບານ.

7. ດຳເນີນການເຜີຍແຜ່ແຜນການແລະ ວິທີການຈັດຕັ້ງປະຕິບັດໃຫ້ທຸກພາກສ່ວນໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເປັນເອກະພາບ, ຍົກສູງຄວາມຮັບຜິດຊອບເຮັດສຳເລັດໜ້າທີ່ຕາມພາລະບົດບາດຂອງຕົນD

# ຂໍຂອບໃຈ